Australian Government

GLOBAL INITIATIVE
AGAINST TRANSNATIONAL ORGANIZED CRIME

# ການຕິດຕາມຄວາມສ່ຽງ ໃນເຂດແມ່ນ້ຳຂອງ

MEKONG NETWORK TO COUNTER TRANSNATIONAL CRIME
MNET-CTC

ສະບັບທີ 1

ທັນວາ 2025

Australian Government

ຂໍ້ສະຫງວນລິຂະສິດ

ວາລະສານສະບັບນີ້ໄດ້ຮັບທຶນສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານ ກະຊວງການຕ່າງປະເທດ ແລະ ການຄ້າ. ຄວາມຄິດເຫັນຕ່າງໆທີ່ໄດ້ສະແດງອອກໃນສິ່ງພິມນີ້, ແມ່ນເປັນຂອງຜູ້ຂຽນພຽງແຕ່ຜູ້ດຽວເທົ່ານັ້ນ ແລະ ທັດສະນະ ຫຼື ຄຳຄິດເຫັນອື່ນໆກໍ່ບໍ່ແມ່ນເປັນຂອງລັດຖະບານອົດສະຕຣາລີສະເໝີໄປ.

© 2025 ອົງການລິເລີ່ມລະດັບໂລກເພື່ອຕ້ານອາຊະຍາກຳຂ້າມຊາດ.
ສະຫງວນລິຂະສິດທຸກປະການ.

ຫ້າມບໍ່ໃຫ້ນຳເອົາເນື້ອໃນສ່ວນໃດໜຶ່ງສ່ວນໜຶ່ງ ບໍ່ວ່າຈະເປັນສ່ວນໃດກໍ່ຕາມທີ່ຢູ່ໃນເອກະສານສະບັບນີ້ ໄປຈັດພິມຄືນໃໝ່ ຫຼື ສົ່ງຕໍ່ ບໍ່ວ່າໃນຮູບແບບໃດກໍ່ຕາມ ຫຼື ດ້ວຍວິທີການໃດກໍ່ຕາມ ໂດຍທີ່ບໍ່ໄດ້ຮັບອະນຸຍາດຢ່າງເປັນລາຍລັກອັກສອນຈາກອົງການລິເລີ່ມລະດັບໂລກເພື່ອຕ້ານອາຊະຍາກຳຂ້າມຊາດ.

ທ່ານສາມາດຕິດຕໍ່ສອບຖາມໂດຍກົງໄດ້ທີ່:
The Global Initiative Against Transnational Organized Crime
Avenue de France 23
Geneva, CH-1202 Switzerland

www.globalinitiative.net

MEKONG NETWORK TO COUNTER TRANSNATIONAL CRIME
MNET-CTC

# ກ່ຽວກັບວາລະສານ ການຕິດຕາມຄວາມສ່ຽງໃນເຂດແມ່ນ້ຳຂອງ (MEKONG RISK MONITOR)

ຍິນດີຕ້ອນຮັບສູ່ວາລະສານ Mekong Risk Monitor ສະບັບທຳອິດ. ວາລະສານ Mekong Risk Monitor ນີ້ແມ່ນວາລະສານທີ່ຖືກຈັດພິມອອກມາເປັນແຕ່ລະໄລຍະໂດຍເຄືອຂ່າຍແມ່ນ້ຳຂອງເພື່ອຕ້ານອາຊະຍາກຳຂ້າມຊາດ ຫລື MNET-CTC, ເຊິ່ງເປັນໂຄງການທີ່ຈັດຕັ້ງປະຕິບັດຮ່ວມກັບ ອົງການລິເລີ່ມລະດັບໂລກເພື່ອຕ້ານອາຊະຍາກຳຂ້າມຊາດ ຫລື GI-TOC ແລະ ລັດຖະບານອົດສະຕຣາລີ. ວາລະສານດັ່ງກ່າວ ມີເປົ້າໝາຍເພື່ອຕິດຕາມການຂະຫຍາຍຕົວຂອງເສດຖະກິດທີ່ຜິດກົດໝາຍໃນປະເທດກຳປູເຈຍ, ລາວ, ມຽນມາ, ໄທ ແລະ ຫວຽດນາມ ພ້ອມທັງ ຍົກໃຫ້ເຫັນເຖິງ ບັນຫາກ່ຽວກັບການພັດທະນາ, ການປົກຄອງ ແລະ ຄວາມໝັ້ນຄົງໃນລະດັບພາກພື້ນ. ວາລະສານສະບັບນີ້ຜູ້ຂຽນແມ່ນສຶກສາໂດຍ ອີງໃສ່ແຫຼ່ງຂໍ້ມູນມືໜຶ່ງ ແລະ ແຫຼ່ງຂໍ້ມູນມືສອງ, ລວມທັງການສຳພາດຜູ້ມີສ່ວນຮ່ວມທີ່ສຳຄັນເຊັ່ນ: ນັກຂ່າວ, ເຈົ້າໜ້າທີ່ລັດ, ອົງການຈັດຕັ້ງທາງສັງຄົມ ແລະ ການຕິດຕາມຈາກແຫຼ່ງຂໍ້ມູນເປີດເພື່ອວິເຄາະ ແລະ ນຳສະເໜີກ່ຽວກັບ ໄພຂົ່ມຂູ່ ແລະ ຄວາມສ່ຽງທີ່ເກີດຂື້ນໃໝ່.

ວາລະສານແຕ່ລະສະບັບແມ່ນຈະນຳສະເຫນີກ່ຽວກັບແນວໂນ້ມ ແລະ ບັນຫາທີ່ສຳຄັນໃນຕະຫຼາດອາຊະຍາກຳຂອງບັນດາປະເທດເຫຼົ່ານີ້, ໂດຍຍົກເອົາສະພາບການປ່ຽນແປງ-ຂະຫຍາຍຕົວໃນລະດັບທ້ອງຖິ່ນມາເຊື່ອມໂຍງກັບ ສະພາບການຂອງພາກພື້ນ ແລະ ໂລກ ເພື່ອເພີ່ມຄວາມເຂົ້າໃຈກ່ຽວກັບຂະບວນອາຊະຍາກຳໃນພາກພື້ນແມ່ນ້ຳຂອງ. ບົດລາຍງານເຫລົ່ານີ້ມີເປົ້າໝາຍເພື່ອສະໜັບສະໜູນດ້ານນະໂຍບາຍ ແລະ ການວາງແຜນໂຄງການໂດຍອີງໃສ່ຫຼັກຖານ ເພື່ອປັບປຸງຄວາມຢືດຢຸ່ນ ແລະ ສົ່ງເສີມການຮ່ວມມືລະຫວ່າງລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະ ຄູ່ຮ່ວມງານໃນລະດັບສາກົນ. ການຕິດຕາມນີ້ແມ່ນສຸມໃສ່ຕະຫຼາດອາຊະຍາກຳສີ່ປະເພດຄື: ການຂູດຮີດ ແລະ ການລ່ວງລະເມີດທາງເພດຕໍ່ແມ່ຍິງ ແລະ ເດັກຍິງ, ການຫຼອກລວງທາງອິນເຕີເນັດ, ການຄ້າຂາຍຢາເສບຕິດ ແລະ ອາຊະຍາກຳທາງການເງິນ, ເຊິ່ງມີຈຸດປະສົງເພື່ອສະແດງໃຫ້ເຫັນວ່າ ສະພາບການທາງດ້ານການເມືອງ, ເສດຖະກິດ ແລະ ເຕັກໂນໂລຊີທີ່ມີການປ່ຽນແປງນັ້ນ, ໄດ້ສ້າງໂອກາດໃຫ້ແກ່ບັນດາອາຊະຍາກຳແນວໃດ ແລະ ລັດຖະບານ, ຊຸມຊົນ ແລະ ອົງການຈັດຕັ້ງທາງສັງຄົມຈະຕອບສະໜອງກັບບັນຫາດັ່ງກ່າວໄດ້ແນວໃດ.

ພວກເຮົາຂໍເຊີນຊວນບັນດາທ່ານຜູ້ອ່ານ ແລະ ຜູ້ຂຽນບົດຄວາມຕ່າງໆຮ່ວມປະກອບສ່ວນ ແລະ ແບ່ງປັນຄຳຄິດເຫັນ, ຂໍ້ມູນ ຫຼື ແນວຄວາມຄິດຕ່າງໆ ເພື່ອໃຫ້ພວກເຮົາໄດ້ນຳໄປປັບປຸງສະບັບຕໍ່ໆໄປໃນອະນາຄົດ ເພື່ອຊ່ວຍສະທ້ອນ ໃຫ້ເຫັນເຖິງແນວໂນ້ມ, ການມີຫຼັກຖານຕົ້ນສະບັບໃຫມ່ໆ ຫຼື ສະພາບແວດລ້ອມກ່ຽວກັບສະພາບການຂອງການຂະຫຍາຍຕົວທີ່ກຳລັງເກີດຂື້ນຢ່າງຕໍ່ເນື່ອງໃນຕະຫຼາດອາດຊະຍາກຳໃນພາກພື້ນ. ສາມາດຕິດຕໍ່ກັບທີມງານ MNET-CTC ໄດ້ທີ່: ioannis.vlassis@globalinitiative.net.

## ກ່ຽວກັບວາລະສານສະບັບນີ້

ວາລະສານສະບັບປະຖົມມະເລີກນີ້, ໄດ້ເວົ້າເຖິງການເຄື່ອນໄຫວກະທຳຜິດທັງໝົດ 5 ດ້ານ ໃນ 5 ບົດຄວາມທີ່ເປັນຕົວກຳນົດຮູບແບບເສດຖະກິດທີ່ຜິດກົດໝາຍໃນພາກພື້ນ. ບົດຄວາມທຳອິດແມ່ນຕິດຕາມການນຳໃຊ້ຊັບສິນດິຈິຕອນໃນການກໍ່ອາຊະຍາກຳທາງການເງິນຢູ່ປະເທດຫວຽດນາມ, ຕິດຕາມການເພີ່ມຂື້ນຂອງການສໍ້ໂກງຊັບສິນດິຈິຕອນ ແລະ ການຟອກເງິນ ລວມທັງ ສະທ້ອນໃຫ້ເຫັນເຖິງຊ່ອງຫວ່າງທີ່ມີຢູ່ໃນນິຕິກຳທີ່ກ່ຽວຂ້ອງກັບການກວດກາ, ທີ່ຜູ້ກະທຳຜິດຍັງສືບຕໍ່ສວຍໃຊ້. ບົດຄວາມທີສອງແມ່ນເວົ້າເຖິງການຂະຫຍາຍຕົວຂອງການເຄື່ອນໄຫວຫຼອກລວງທາງອິນເຕີເນັດໃນໄລຍະທີ່ຜ່ານມາໃນເຂດເສດຖະກິດພິເສດສາມຫຼ່ຽມຄຳໃນປະເທດລາວ, ປະເມີນການປາບປາມຄັ້ງຫລ້າສຸດຂອງລັດຖະບານ ແລະ ປຶກສາຫາລືກ່ຽວກັບສິ່ງທີ່ອາດຈະເກີດຂື້ນໃນອະນາຄົດຂອງເຂດດັ່ງກ່າວ. ບົດຄວາມທີສາມແມ່ນການພິຈາລະນາເຖິງແມ່ຍິງກຳປູເຈຍທີ່ມີຄວາມສ່ຽງຕໍ່ການຖືກກົດຂີ່, ສືບສວນຮູບແບບການຄ້າເຈົ້າສາວທີ່ສົ່ງໄປປະເທດຈີນຢ່າງຕໍ່ເນື່ອງ ແລະ ການສົມຮູ້ຮ່ວມຄິດຂອງນາຍໜ້າຄົນກາງ ລວມທັງ ເຈົ້າໜ້າທີ່ທີ່ໃຫ້ການສະຫນັບສະຫນູນການຄ້າມະນຸດໃນຮູບແບບດັ່ງກ່າວ. ບົດຄວາມທີສີ່ແມ່ນສຳຫຼວດເບິ່ງວິທີການບໍລິການຈັດສົ່ງສິນຄ້າໂດຍຜ່ານທາງແອັບມືຖືໃນປະເທດໄທ, ທີ່ໄດ້ຖືກສວຍໃຊ້ໂດຍເຄືອຂ່າຍຢາເສບຕິດເພື່ອການຈັດຈຳຫນ່າຍ, ທີ່ເຮັດໃຫ້ເສັ້ນແບ່ງຂອງຄວາມແຕກຕ່າງລະຫວ່າງການບໍລິການທີ່ຖືກຕ້ອງຕາມກົດໝາຍ ແລະ ການຈັດສົ່ງທີ່ຜິດກົດໝາຍນັ້ນບໍ່ຈະແຈ້ງ. ບົດຄວາມສຸດທ້າຍແມ່ນປະເມີນການລັກລອບຂົນເງິນສົດເຂົ້າ ແລະ ອອກຈາກລາວ, ສຳຫຼວດເບິ່ງຄວາມສຳຄັນຂອງເງິນສົດໃນເສດຖະກິດອາຊະຍາກຳທ້ອງຖິ່ນ ແລະ ການທີ່ຊາຍແດນທີ່ມີຊ່ອງຫວ່າງເປີດໂລ່ງ ແລະ ລວມທັງຄວາມລົ້ມເຫຼວຂອງລະບົບການຮັກສາຄວາມປອດໄພ, ທີ່ກາຍເປັນສິ່ງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນຍ້າຍເງິນຂ້າມຊາຍແດນ. ເລື່ອງຕ່າງໆທັງຫມົດນີ້ແມ່ນໄດ້ເນັ້ນໃຫ້ເຫັນເຖິງຄວາມສ່ຽງຕ່າງໆທີ່ເກີດຂື້ນກັບຊຸມຊົນ, ສະຖາບັນຕ່າງໆຂອງລັດ ແລະ ເສດຖະກິດທ້ອງຖິ່ນໃນພາກພື້ນແມ່ນ້ຳຂອງ.ຄວາມສະດວກໃຫ້ແກ່ການເຄື່ອນຍ້າຍເງິນຂ້າມຊາຍແດນ. ເລື່ອງຕ່າງໆທັງຫມົດນີ້ແມ່ນໄດ້ເນັ້ນໃຫ້ເຫັນເຖິງຄວາມສ່ຽງຕ່າງໆທີ່ເກີດຂື້ນກັບຊຸມຊົນ, ສະຖາບັນຕ່າງໆຂອງລັດ ແລະ ເສດຖະກິດທ້ອງຖິ່ນໃນພາກພື້ນແມ່ນ້ຳຂອງ.

# ເຂດເສດຖະກິດພິເສດສາມຫຼ່ຽມຄຳ: ຈຸດຈົບຂອງກຸ່ມອາຊະຍາກຳ ຫຼື ການແຜ່ຂະຫຍາຍໄປສູ່ສະຖານທີ່ໃໝ່?

ໃນວັນທີ 24 ຕຸລາ 2025, ຄະນະກຳມະການຄຸ້ມຄອງເຂດເສດຖະກິດພິເສດສາມຫຼ່ຽມຄຳ (GTSEZ) ໃນປະເທດລາວໄດ້ປະກາດວ່າ ການເຄື່ອນໄຫວການພະນັນອອນລາຍທັງໝົດພາຍໃນເຂດຕ້ອງຢຸດຕິພາຍໃນວັນທີ 2 ພະຈິກ ແລະ ບັນດາບໍລິສັດ ພ້ອມທັງ ພະນັກງານທັງໝົດທີ່ກ່ຽວຂ້ອງກັບການພະນັນອອນລາຍຈະຕ້ອງອອກຈາກເຂດກ່ອນມື້ທີ່ກຳນົດ, ຖ້າບໍ່ດັ່ງນັ້ນ ກໍ່ຈະປະເຊີນກັບຜົນກະທົບທີ່ຕາມມາ, ເຊິ່ງກໍ່ບໍ່ໄດ້ລະບຸລາຍລະອຽດໄວ້.[27] ນັບຕັ້ງແຕ່ວັນທີ 2-18 ພະຈິກ, ໄດ້ມີການລະດົມກຳລັງເພື່ອດຳເນີນການກວດກາຂະໜາດໃຫຍ່ພາຍໃນເຂດເພື່ອໃຫ້ຮັບປະກັນຕໍ່ການປະຕິບັດຕາມຄຳສັ່ງໃໝ່.[28] ເນື່ອງຈາກວ່າຄຳສັ່ງດັ່ງກ່າວໄດ້ອອກເປັນພາສາຈີນ ແລະ ລາວເທົ່ານັ້ນ, ຈຶ່ງເປັນໄປໄດ້ວ່າ ເຈດຕະນາຂອງການດຳເນີນການດັ່ງກ່າວ, ກໍ່ແມ່ນເພື່ອແຈ້ງໃຫ້ລັດຖະບານຈີນໄດ້ຮັບຊາບ ແລະ ລວມໄປເຖິງກຸ່ມຜູ້ຄ້າການພະນັນອອນລາຍ ແລະ ການຫຼອກລວງທີ່ເປັນຂອງຄົນຈີນວ່າ ທາງການລາວກຳລັງເລີ່ມຄວບຄຸມກິດຈະກຳທີ່ຜິດກົດໝາຍ ພາຍໃນເຂດຢ່າງເຂັ້ມງວດ.[29] ເຖິງຢ່າງໃດກໍຕາມ, ກໍ່ບໍ່ຕ່າງກັບການປະກາດກ່ອນໜ້ານີ້ທີ່ກ່ຽວຂ້ອງກັບການຫຼອກລວງອອນລາຍ ແລະ ການພະນັນອອນລາຍ, ເຊິ່ງແຈ້ງການຂອງຄະນະກຳມະການຄຸ້ມຄອງ GTSEZ ກ່ຽວກັບແຜນການດຳເນີນການບັງຄັບໃຊ້ກົດໝາຍຢ່າງເດັດຂາດ, ໄດ້ເປີດໂອກາດໃຫ້ແກ່ຜູ້ກະທຳຜິດໃນການຍ້າຍອອກໄປຢູ່ພື້ນທີ່ອື່ນເປັນການຊົ່ວຄາວ.[30] ໃນປັດຈຸບັນ, ທາງການລາວກຳລັງເຂັ້ມງວດຫຼາຍຂຶ້ນໃນການປາບປາມເສດຖະກິດຫຼອກລວງພາຍໃນປະເທດຫລືບໍ່? ສິ່ງນີ້ມີໝາຍຄວາມແນວໃດຕໍ່ອະນາຄົດຂອງ GTSEZ? ແລະ ສິ່ງນີ້ແມ່ນຜົນມາຈາກອິດທິພົນທາງດ້ານເສດຖະກິດ ແລະ ຄວາມໝັ້ນຄົງຂອງຈີນທີ່ເພີ່ມຂຶ້ນໃນພາກພື້ນໃນລະດັບໃດ?



ເຂດເສດຖະກິດພິເສດສາມຫຼ່ຽມຄຳຂອງລາວໄດ້ປະເຊີນກັບການກ່າວຫາວ່າມີສ່ວນຮ່ວມໃນກິດຈະກຳທີ່ຜິດກົດໝາຍ, ລວມທັງການຫຼອກລວງທາງອອນລາຍ. ຮູບພາບໂດຍ STR/AFP ຈາກ Getty Images

## ການເກີດຂຶ້ນຂອງເມືອງແຫ່ງອາຊະຍາກຳ

ເຂດເສດຖະກິດພິເສດ GTSSEZ ໄດ້ເລີ່ມມີຮູບຮ່າງຂຶ້ນໃນປີ 2007 ເມື່ອກຸ່ມບໍລິສັດ ຄິງໂຣມັນ (Kings Romans Group) ເຊິ່ງເປັນອົງກອນອາຊະຍາກຳຂ້າມຊາດ, ທີ່ດຳເນີນການໂດຍນັກທຸລະກິດຈີນ ຈ້າວເຫວີຍ (Zhao Wei), ຜູ້ທີ່ຢູ່ພາຍໃຕ້ມາດຕະການຂວ້ຳບາດຂອງສະຫະລັດອາເມລິກາ[31] - ໄດ້ເຊັນສັນຍາສຳປະທານ 99 ປີກັບລັດຖະບານລາວ ໂດຍອະນຸຍາດໃຫ້ພວກເຂົາມີອຳນາດຄວບຄຸມພື້ນທີ່ຈຳນວນ 39 ຕາລາງໄມ ຫຼື ປະມານ 10,000 ເຮັກຕ້າ ໃນດິນແດນລາວທີ່ຢູ່ແຄມຝັ່ງແມ່ນ້ຳຂອງ, ເຊິ່ງເປັນຈຸດທີ່ເຂດແດນປະເທດມຽນມາ, ໄທ ແລະ ລາວ ເຊື່ອມຕິດກັນ.[32] ເຂດດັ່ງກ່າວໄດ້ຮັບການອອກແບບໂດຍໃຫ້ມີ ຣີສອດ ຄາສິໂນຂະໜາດໃຫຍ່ເປັນສູນກາງ ເຊິ່ງໃນເບື້ອງຕົ້ນແມ່ນເພື່ອໃຊ້ໃນການຟອກເງິນທີ່ຜິດກົດໝາຍຈາກການຄ້າຢາເສບຕິດຂອງມຽນມາ ແລະຕໍ່ມາກໍ່ໃຊ້ເປັນສາກບັງໜ້າສຳລັບການພະນັນອອນລາຍ ແລະ ການຫຼອກລວງທາງອອນລາຍ, ໂດຍອີງຕາມການລາຍງານຂອງກະຊວງການເງິນຂອງສະຫະລັດອາເມລິກາ.[33]

ຜູ້ທີ່ຮ່ວມງານຢ່າງໃກ້ຊິດກັບກຸ່ມບໍລິສັດ Kings Romans Group ໃນເຂດດັ່ງກ່າວ ແມ່ນກອງກຳລັງປະກອບອາວຸດຊົນເຜົ່າທີ່ສຳຄັນຫຼາຍກຸ່ມ ໂດຍສະເພາະແມ່ນກອງທັບສະຫະລັດແຫ່ງລັດວ້າ (UWSA) ເຊິ່ງໄດ້ຖືກຂວ້ຳບາດໂດຍກະຊວງການເງິນຂອງສະຫະລັດອາເມລິກາໃນປີ 2018 ເນື່ອງຈາກມີສ່ວນກ່ຽວຂ້ອງກັບຢາເສບຕິດ.[34] ໃນທ້າຍປີ 2024, ປະຊາກອນໃນເຂດນີ້ມີປະມານ 120.000 ຄົນ,[35] ເຊິ່ງໃນນັ້ນຫຼາຍກວ່າ 60% ແມ່ນມາຈາກປະເທດຈີນ ຫຼື ມຽນມາ. ມີລາຍງານວ່າ ເຂດດັ່ງກ່າວປະກອບໄປດ້ວຍຄາສິໂນ, ຮ້ານຄາຣາໂອເກະ, ໂຮງແຮມ, ສະຖານທີ່ບັນເທີງຄົບວົງຈອນ, ສະຖານບໍລິການທາງເພດ, ຮ້ານຢາເສບຕິດ ແລະ ສະຖານທີ່ໃຫ້ບໍລິການຫຼາຍແຫ່ງທີເປັນການພະນັນອອນລາຍ ແລະ ການຫຼອກລວງອອນລາຍ, ລວມທັງການບັງຄັບໃຊ້ແຮງງານຜິດກົດໝາຍ.[36]

ເຖິງວ່າຈະມີກິດຈະກຳທີ່ຜິດກົດໝາຍນີ້, ຈ້າວເຫວີຍ ແລະ ກຸ່ມບໍລິສັດ Kings Romans Group ຂອງຈ້າວເຫວີຍ ກໍ່ຍັງຄົງອ້າງວ່າ GTSEZ ໄດ້ພັດທະນາ ແລະ ເຊິ່ງໄດ້ເຮັດໃຫ້ພາກພື້ນມີສະຖຽນລະພາບ. ໃນການສຳພາດຄັ້ງໜຶ່ງ, ຈ້າວເຫວີຍໄດ້ຊີ້ໃຫ້ເຫັນເຖິງຄຸນນະພາບທີ່ດີຂອງຖະໜົນຫົນທາງໃນເຂດດັ່ງກ່າວ ແລະ ການກໍ່ສ້າງສະຖານທີ່ທ່ອງທ່ຽວຫຼາຍແຫ່ງ, ລວມທັງ 'ເຂດໄຊນ່າທາວ' (Chinatown) ທີ່ມີກຸ່ມນັກທ່ອງທ່ຽວຈາກຈີນໄປຢ້ຽມຢາມເປັນບາງຄັ້ງຄາວ.[37] ເອກະສານສຳລັບການສົ່ງເສີມເຂດດັ່ງກ່າວໄດ້ເນັ້ນໜັກເຖິງສະໜາມບິນຂະໜາດໃຫຍ່ໃນເຂດ,[38] ແຕ່ກໍ່ບໍ່ໄດ້ກ່າວເຖິງເລື່ອງຕ່າງໆທີ່ນັບບໍ່ຖ້ວນຂອງຜູ້ເຄາະຮ້າຍຈາກການຄ້າມະນຸດ, ລາຍຮັບຫຼາຍຕື້ໂດລາຈາກການຫຼອກລວງທາງອອນລາຍ, ການຟອກເງິນທີ່ເກີດຂຶ້ນຢ່າງແຜ່ຫຼາຍຜ່ານຄາສິໂນ, ແລະ ການຍຶດຢາເສບຕິດ ແລະ ສິນຄ້າຜິດກົດໝາຍອື່ນໆຜ່ານເຂດດັ່ງກ່າວເຂົ້າໄປໃນປະເທດໄທທີ່ມີເປັນປະຈຳ.[39]

## ນີ້ຖືເປັນການປາບປາມ ຫຼື ບໍ?

ເຖິງແມ່ນວ່າຈະມີການຂວ້ຳບາດກໍ່ຕາມ, ແຕ່ກໍ່ມີລາຍງານວ່າ ກຸ່ມບໍລິສັດ Kings Romans Group ຍັງສືບຕໍ່ໃຫ້ໂອກາດແກ່ທຸລະກິດທີ່ຜິດກົດໝາຍໃນການດຳເນີນການພາຍໃນເຂດດັ່ງກ່າວ.[40] ໃນເດືອນສິງຫາ 2024, ເຂດດັ່ງກ່າວໄດ້ເປັນທີ່ຕັ້ງສ່ວນໃຫຍ່ຂອງການຫຼອກລວງທາງອອນລາຍໃນປະເທດ, ເຊິ່ງສ້າງລາຍຮັບທີ່ຜິດກົດໝາຍປະມານ 10.9 ຕື້ໂດລາສະຫະລັດອາເມລິກາໃນແຕ່ລະປີ.[41]

ເຖິງຢ່າງໃດກໍຕາມ, ໃນເດືອນສິງຫາ 2024, ຈ້າວເຫວີຍໄດ້ປະກາດໃນລະຫວ່າງພິທີທີ່ທ່ານເປັນປະທານຮ່ວມກັບເຈົ້າແຂວງບໍ່ແກ້ວວ່າ ກິດຈະກຳທາງອອນລາຍທີ່ຜິດກົດໝາຍທັງໝົດພາຍໃນເຂດ GTSEZ ຈະຕ້ອງສິ້ນສຸດລົງພາຍໃນສອງອາທິດ.[42] ເບິ່ງຄືວ່າເປັນຜົນມາຈາກຄວາມກົດດັນຮ່ວມກັນຈາກປະເທດຈີນ, ໄທ ແລະ ລາວ, ການປະກາດນີ້ເຮັດໃຫ້ມີບຸກຄົນຈາກເຂດ GTSEZ ໄດ້ເດີນທາງອອກຢ່າງກະທັນຫັນໄປສູ່ປະເທດມຽນມາ ແລະ ກຳປູເຈຍ. ສ່ວນຄົນອື່ນໆ, ສ່ວນໃຫຍ່ແມ່ນຜູ້ບໍລິຫານລະດັບສູງ, ໄດ້ຂ້າມເຂົ້າໄປໃນປະເທດໄທ ຫຼື ເດີນທາງໄປນະຄອນຫຼວງວຽງຈັນເປັນການຊົ່ວຄາວ, ເຊິ່ງເປັນບ່ອນທີ່ພວກເຂົາລໍຖ້າການປະກາດຈາກ ຈ້າວເຫວີຍ ວ່າມີຄວາມປອດໄພທີ່ຈະກັບຄືນ. ນັບຕັ້ງແຕ່ເດືອນສິງຫາຈົນເຖິງເດືອນທັນວາ 2024, ມີປະມານ 900 ຄົນ ທີ່ຖືກຈັບກຸມໂດຍທາງການລາວ ແລະ ໄດ້ຖືກສົ່ງກັບຄືນປະເທດຈາກເຂດ GTSEZ.[43]

ໃນເດືອນທັນວາ 2024, ເບິ່ງຄືວ່າ ຈ້າວເຫວີຍ ໄດ້ໃຫ້ສັນຍານວ່າ ການດຳເນີນການໄດ້ສິ້ນສຸດລົງແລ້ວ ແລະ ບຸກຄົນຕ່າງໆສາມາດກັບຄືນໄປ GTSEZ ໄດ້, ໂດຍຊ່ອງທາງສື່ສັງຄົມອອນລາຍຂອງຈ້າວເຫວີຍໄດ້ເຜີຍແຜ່ຮູບພາບຂອງຕົນເອງທີ່ໄດ້ຮັບຫຼຽນໄຊທາງດ້ານການພັດທະນາຈາກ ທ່ານ ວຽງສະຫວັດ ສີພັນດອນ ທີ່ເປັນເຈົ້າແຂວງ ແຂວງຫຼວງນ້ຳທາ.[44] ຮອດເດືອນມັງກອນ 2025, ມີລາຍງານວ່າມີພົນລະເມືອງຈີນຈຳນວນຫຼວງຫຼາຍໄດ້ກັບຄືນມາເຂດດັ່ງກ່າວ.

ໃນຂະນະດຽວກັນ, ຄຳສັ່ງຈາກກອງພົນທີ 171 ຂອງ UWSA - ເຊິ່ງເປັນໜ່ວຍທະຫານທີ່ເຄີຍໃຫ້ຄວາມປອດໄພແກ່ເຂດ GTSEZ - ໄດ້ສົ່ງສັນຍານທີ່ຂັດແຍ້ງກັນ. ໃນການເຄື່ອນໄຫວທີ່ເກືອບຈະແນ່ນອນວ່າ ໄດ້ຮັບແຮງກົດດັນຈາກຈີນ, UWSA ໄດ້ຮຽກຮ້ອງໃຫ້ບຸກຄະລາກອນທັງໝົດຂອງຕົນ ແລະ ປະຊາຊົນວ້າທັງໝົດທີ່ຢູ່ໃນປະເທດລາວໃຫ້ກັບຄືນສູ່ລັດວ້າ ຫຼືຖ້າບໍ່ດັ່ງນັ້ນກໍ່ຈະປະເຊີນກັບການລົງໂທດ.[45] UWSA ໄດ້ພະຍາຍາມອະທິບາຍການດຳເນີນການນີ້ ໂດຍການກ່າວວ່າ ຈຳເປັນຕ້ອງຝຶກອົບຮົມກອງກຳລັງເພີ່ມເຕີມເພື່ອປົກຄອງດິນແດນທີ່ໄດ້ມາຢູ່ພາຍໃຕ້ການຄວບຄຸມຂອງຕົນເມື່ອບໍ່ດົນມານີ້.[46]ໃນຄວາມເປັນຈິງແລ້ວ, ການດຳເນີນການດັ່ງກ່າວຄ້າຍຄືກັນກັບການຮຽກຄືນພົນລະເມືອງຂອງຈີນໃຫ້ກັບຄືນປະເທດໃນລະຫວ່າງການລະບາດຂອງ COVID-19. ບຸກຄະລາກອນວ້າ ຈຳນວນຫຼວງຫຼາຍທີ່ເຮັດວຽກຢູ່ພາຍໃນເຂດດັ່ງກ່າວແມ່ນໜຶ່ງໃນບັນດາຜູ້ທີ່ອອກໄປໃນຊ່ວງເດືອນສຸດທ້າຍຂອງປີ 2024.

ໃນກາງປີ 2025, ຄຳຖາມຕ່າງໆໄດ້ເກີດຂຶ້ນອີກຄັ້ງກ່ຽວກັບວ່າ ຈ້າວເຫວີຍ ແລະສະມາຊິກໃນຄອບຄົວຂອງລາວ, ຜູ້ທີ່ເຄີຍມີສ່ວນຮ່ວມໃນການຄຸ້ມຄອງເຂດດັ່ງກ່າວຢ່າງເປີດເຜີຍນັ້ນ, ກໍ່ອາດຈະປະເຊີນກັບສິ່ງທ້າທາຍຕື່ມອີກ.[47] ຕະຫຼອດເຄິ່ງທຳອິດຂອງປີ 2025, ເຂດ GTSEZ ໄດ້ຮັບແຂກລະດັບສູງຈາກລັດວິສາຫະກິດຕ່າງໆຂອງຈີນ[48] ແລະ ມີການຢ້ຽມຢາມຫຼາຍຄັ້ງຈາກຮອງນາຍົກລັດຖະມົນຕີຂອງລາວ.[49] ນອກຈາກນີ້ ກໍ່ຍັງໄດ້ມີການຈັດພິທີລະດັບສູງຫຼາຍຄັ້ງ, ລວມທັງພິທີເປີດອາຄານດ່ານພາສີແຫ່ງໃໝ່ຂອງເຂດດັ່ງກ່າວ.[50] ສິ່ງທີ່ເຫັນໄດ້ຢ່າງຈະແຈ້ງສຳລັບຜູ້ທີ່ບໍ່ເຂົ້າຮ່ວມພິທີທັງໝົດນີ້ກໍ່ແມ່ນ ຈ້າວເຫວີຍ ແລະສະມາຊິກໃນຄອບຄົວຂອງລາວ. ການປະກົດຕົວຕໍ່ສາທາລະນະຄັ້ງສຸດທ້າຍຂອງຈ້າວເຫວີຍ ແມ່ນໃນເດືອນທັນວາ 2024. ໂພສຂໍ້ຄວາມຕ່າງໆໃນສື່ສັງຄົມອອນລາຍ WeChat ຂອງຈີນໄດ້ຄາດເດົາໄປຢ່າງບໍ່ມີຫລັກຖານທີ່ແໜ້ນໜາກ່ຽວກັບທີ່ຢູ່ຂອງ ຈ້າວເຫວີຍ, ໂດຍມີໂພສຂໍ້ຄວາມໜຶ່ງອ້າງອີງເຖິງລາຍງານຂອງສື່ມວນຊົນຂອງປະເທດກຳປູເຈຍທີ່ລະບຸວ່າ ຈ້າວເຫວີຍ ໄດ້ 'ຖອຍຫ່າງຈາກຄວາມສົນໃຈຂອງສາທາລະນະຊົນໄປແລ້ວ'.[51]

ມີອີກສິ່ງໜຶ່ງທີ່ສະແດງໃຫ້ເຫັນວ່າ ສິ່ງຕ່າງໆອາດຈະບໍ່ເປັນໄປດ້ວຍດີສຳລັບເຄືອຂ່າຍອາດຊະຍາກຳຂອງ ຈ້າວເຫວີຍ, ເຊິ່ງກໍ່ແມ່ນຄວາມຈິງທີ່ວ່າ ທີມງານຜູ້ບໍລິຫານລະດັບສູງທັງໝົດຂອງເຂດ GTSEZ ໄດ້ລາອອກຈາກຕຳແໜ່ງກ່ອນເດືອນສິງຫາ 2025, ເຮັດໃຫ້ທີມງານຜູ້ຄຸ້ມຄອງຂອງເຂດດັ່ງກ່າວຕ້ອງໄດ້ອອກປະກາດຮັບສະໝັກ CEO ແລະຮອງ CEO ຄົນໃໝ່.[52]

ໃນຂະນະທີ່ມີລາຍງານກ່ຽວກັບຜູ້ເຄາະຮ້າຍລາຍໃໝ່ທີ່ຖືກລັກລອບຄ້າມະນຸດເຂົ້າໄປໃນເຂດ GTSEZ ຕະຫຼອດປີ 2025 ແລະ ການເຄື່ອນໄຫວຫຼອກລວງຢ່າງຕໍ່ເນື່ອງພາຍໃນເຂດດັ່ງກ່າວ,[53] ແຕ່ກໍ່ມີຫຼັກຖານວ່າ ການເຄື່ອນໄຫວຫຼອກລວງຢູ່ໃນລະດັບທີ່ຕ່ຳກວ່າຫຼາຍຖ້າເມື່ອທຽບກັບຕົ້ນປີ 2024.[54] ໃນຂະນະດຽວກັນ, ຂໍ້ມູນສຳມະໂນຄົວປະຊາກອນທີ່ໄດ້ເຜີຍແຜ່ໃນເດືອນກໍລະກົດ 2025 ຊີ້ໃຫ້ເຫັນວ່າ ປະຊາກອນໄດ້ຫຼຸດລົງປະມານ 50 ເປີເຊັນ, ເຫລືອພຽງ 65.300 ຄົນນັບຕັ້ງແຕ່ທ້າຍປີ 2024.[55] ການກໍ່ສ້າງອາຄານຫຼາຍແຫ່ງກໍ່ເບິ່ງຄືວ່າຈະຢຸດສະງັກລົງເມື່ອມາເຖິງເດືອນຕຸລາ 2025. ອິນຟລູເອັນເຊີຈາກຈີນທີ່ໄປຢ້ຽມຢາມເຂດດັ່ງກ່າວເມື່ອບໍ່ດົນມານີ້ຍັງໄດ້ໂພສຂໍ້ຄວາມຢ່າງກວ້າງຂວາງກ່ຽວກັບຈຳນວນຮ້ານອາຫານ, ບາ ແລະ ຮ້ານກາເຟ, ເຊິ່ງວ່າໃນປະຈຸບັນນີ້ໄດ້ປິດລົງໄປແລ້ວ.[56]

## ອະນາຄົດຂອງເຂດ

ນັບຕັ້ງແຕ່ຕົ້ນປີ 2025, ມີແນວໂນ້ມສາມຢ່າງທີ່ເລີ່ມມີຄວາມຈະແຈ້ງຂຶ້ນເລື້ອຍໆ. ຢ່າງທຳອິດ, ລັດຖະບານລາວໄດ້ພະຍາຍາມສະແດງໃຫ້ເຫັນວ່າພວກເຂົາຄວບຄຸມ ແລະ ບໍລິຫານເຂດ GTSEZ, ແລະກຳລັງປາບປາມກິດຈະກຳທີ່ຜິດກົດໝາຍ. ລັດຖະບານລາວໄດ້ໃຫ້ການຕ້ອນຮັບການຢ້ຽມຢາມຂອງນັກການທູດຕ່າງປະເທດ ແລະ ໄດ້ເປັນຜູ້ນຳໃນການປະກາດຄັ້ງຫລ້າສຸດທີ່ກ່ຽວກັບການເປີດດ່ານພາສີແຫ່ງໃໝ່.[57] ຄະນະກຳມະການຄຸ້ມຄອງເຂດດັ່ງກ່າວບໍ່ຄ່ອຍປະກົດເຫັນເປັນທີ່ໂດດເດັ່ນໃນລາຍງານຂອງສື່ມວນຊົນກ່ຽວກັບກິດຈະກຳພາຍໃນເຂດດັ່ງກ່າວ. ວິດີໂອປະຊາສຳພັນທີ່ໄດ້ເປີດຕົວໃນປີ 2025 ໄດ້ເນັ້ນໜັກວ່າ ຈຸດກວດກາເຂົ້າ ແລະ ອອກຂອງເຂດດັ່ງກ່າວແມ່ນຢູ່ພາຍໃຕ້ການຄວບຄຸມໂດຍລັດຖະບານລາວ ແລະ ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງຂອງລາວ. ສິ່ງນີ້ຂັດກັບເລື່ອງຕ່າງໆທີ່ກ່າວເຖິງກ່ອນໜ້ານີ້ທີ່ກ່ຽວກັບເຂດດັ່ງກ່າວ, ທີ່ຢູ່ພາຍໃຕ້ການຮັກສາຄວາມປອດໄພຢ່າງສົມບູນໂດຍຄະນະກຳມະການຄຸ້ມຄອງເຂດ, ເຊິ່ງໄດ້ໃຊ້ບໍລິການຂອງເຈົ້າໜ້າທີ່ຮັກສາຄວາມປອດໄພຈາກພາກເໜືອຂອງມຽນມາ.[58]

ຢ່າງທີສອງ, ຄະນະກຳມະການຄຸ້ມຄອງເຂດດັ່ງກ່າວໄດ້ຮ່ວມມືກັບທຸລະກິດຈີນຫຼາຍແຫ່ງເພື່ອພະຍາຍາມໃຫ້ມີການກ່າວເຖິງຂອງ 'ການຫັນປ່ຽນທາງເສດຖະກິດທີ່ປະສົບຜົນສຳເລັດ'. ໃນຕົ້ນປີ 2025, ຄະນະກຳມະການຄຸ້ມຄອງເຂດໄດ້ຈ້າງບໍລິສັດ Yunnan Tengyun Xichuang Investment ທີ່ຕັ້ງຢູ່ປະເທດຈີນ, ເພື່ອຂຽນບົດລາຍງານທີ່ມີຫົວຂໍ້ວ່າ 'ການຮ່ວມມືທີ່ເປັນມິດໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ: ບົດລາຍງານການສຶກສາຄົ້ນຄວ້າກ່ຽວກັບການຫັນປ່ຽນການພັດທະນາຂອງເຂດ'.[59] ບໍລິສັດໄດ້ເຊີນນັກຄົ້ນຄວ້າ ແລະ ຜູ້ກຳນົດນະໂຍບາຍທີ່ຕັ້ງຢູ່ແຂວງຢຸນນານເຂົ້າຮ່ວມກອງປະຊຸມທາງວິຊາການກ່ຽວກັບບົດລາຍງານດັ່ງກ່າວທີ່ເປັນສ່ວນໜຶ່ງຂອງການດຳເນີນງານເພື່ອເພີ່ມທະວີການຮ່ວມມືໃນໂຄງການລິເລີ່ມໜຶ່ງແຖບໜຶ່ງເສັ້ນທາງ (BRI) ລະຫວ່າງຈີນ ແລະ ລາວໃນເຂດ GTSEZ. ສິ່ງນີ້ເບິ່ງຄືວ່າຈະສອດຄ່ອງກັບຄວາມຕັ້ງໃຈອັນຍິ່ງໃຫຍ່ຂອງຈີນທີ່ຈະເພີ່ມທະວີບົດບາດອັນສຳຄັນທາງດ້ານເສດຖະກິດ ແລະ ຄວາມໝັ້ນຄົງໃນເຂດດັ່ງກ່າວ. ໃນເດືອນທັນວາ 2024, ກຸ່ມນັກລົງທຶນຈີນ, ລວມທັງບໍລິສັດໃນເຄືອຂອງລັດວິສາຫະກິດປະຈຳມົນທົນ, ເຊັ່ນ: HCT Group, ໄດ້ລົງນາມໃນຂໍ້ຕົກລົງຫຼາຍສະບັບທີ່ສຸມໃສ່ການພັດທະນາຟາມລ້ຽງງົວຂະໜາດໃຫຍ່ໃນລະດັບອຸດສາຫະກຳເພື່ອສະໜອງງົວ 500.000 ໂຕຕໍ່ປີໃຫ້ແກ່ຕະຫຼາດຈີນ. ຂໍ້ຕົກລົງນີ້ໄດ້ຮັບການນຳສະເໜີໃນຖານະຄວາມພະຍາຍາມຂອງລັດຖະບານມົນທົນຢຸນນານເພື່ອດຳເນີນການຕາມຂໍ້ຕົກລົງລະດັບສູງທີ່ໄດ້ລົງນາມໂດຍການນຳລະດັບສູງຂອງປະເທດຈີນ ແລະ ລາວກ່ຽວກັບການຈັດຕັ້ງປະຕິບັດ BRI.[60]

ຢ່າງທີສາມ, ມາຮອດປະຈຸບັນ, ການດຳເນີນການເພື່ອແກ້ໄຂບັນຫາອາຊະຍາກຳພາຍໃນເຂດດັ່ງກ່າວກໍ່ຍັງບໍ່ທັນສາມາດແກ້ໄຂບັນຫາທີ່ກ່ຽວຂ້ອງກັບການຄ້າມະນຸດ, ການບັງຄັບໃຫ້ກະທຳຜິດ, ການຫຼອກລວງທາງອອນລາຍ ແລະ ການຟອກເງິນໄດ້ໃນລະດັບພື້ນຖານ.[61] ກົງກັນຂ້າມ, ແນວທາງຂອງຄະນະກຳມະການຄຸ້ມຄອງເຂດທີ່ໄດ້ມີການແຈ້ງໃຫ້ຊາບລ່ວງໜ້າຫຼາຍຄັ້ງທີ່ກ່ຽວກັບການດຳເນີນການການບັງຄັບໃຊ້ກົດໝາຍໃດໆນັ້ນ, ໄດ້ເຮັດໃຫ້ຜູ້ກະທຳຜິດທາງອາຊະຍາກຳສາມາດອອກຈາກເຂດດັ່ງກ່າວໄດ້ໃນໄລຍະຊົ່ວຄາວເພື່ອຫຼີກເວັ້ນການກວດສອບ. ກ່ອນການກວດກາຄັ້ງຫລ້າສຸດທີ່ເລີ່ມຕົ້ນໃນວັນທີ 2 ພະຈິກ 2025, ຊາວຕ່າງປະເທດຈຳນວນຫຼວງຫຼາຍໄດ້ຍ້າຍໄປຢູ່ນະຄອນຫຼວງວຽງຈັນ, ບໍ່ເຕນ, ທ່າຂີ້ເຫຼັກ ແລະ ສະຖານທີ່ອື່ນໆໃນທົ່ວພາກພື້ນ.[62] ປະຈຸບັນມີລາຍງານເພີ່ມຫຼາຍຂຶ້ນກ່ຽວກັບກິດຈະກຳຂອງສູນຫຼອກລວງທີ່ເກີດຂຶ້ນໃນສະຖານຕ່າງໆເຫຼົ່ານີ້ເຊິ່ງເປັນທາງເລືອກ.[63]

## ການຂະຫຍາຍຕົວ

ດ້ວຍຄວາມສົນໃຈຈາກສາກົນທີ່ເພີ່ມຂຶ້ນກ່ຽວກັບກິດຈະກຳທາງອາຊະຍາກຳໃນເຂດ GTSEZ, ມີສິ່ງທີ່ສະແດງໃຫ້ເຫັນຫຼາຍຢ່າງຂອງການມີສ່ວນຮ່ວມຫຼາຍຂຶ້ນໃນເຂດດັ່ງກ່າວຂອງເຈົ້າໜ້າທີ່ລາວ ແລະ ຫນ່ວຍງານຂອງລັດຖະບານຈີນ, ລວມທັງວິສາຫະກິດຂອງລັດ. ໃນຂະນະດຽວກັນ, ຜູ້ນຳຂອງເຂດ GTSEZ ກໍ່ໄດ້ຫລຸດຜ່ອນບົດບາດໃຫ້ຕ່ຳລົງຫຼາຍໃນປີທີ່ຜ່ານມາ, ເຊິ່ງອາດຈະເປັນການສະໜັບສະໜູນໃນຄວາມພະຍາຍາມຂອງລັດຖະບານລາວ ແລະ ຈີນໃນການໃຫ້ມີການກ່າວເຖິງທີ່ວ່າ ພວກເຂົາສາມາດຄວບຄຸມສະຖານະການໄດ້. ແຕ່ຢ່າງໃດກໍ່ຕາມ, ເຖິງແມ່ນວ່ານະໂຍບາຍໄດ້ເຂັ້ມງວດຂຶ້ນ, ເຊິ່ງເຮັດໃຫ້ເກີດມີການຫຼຸດຜ່ອນລົງຫຼາຍຢ່າງຈະແຈ້ງຂອງກິດຈະກຳໃນເຂດ GTSEZ, ແຕ່ກໍ່ມີຕົວຊີ້ບອກຈຳນວນໜ້ອຍເຊິ່ງຊີ້ໃຫ້ເຫັນວ່າ ເຈົ້າໜ້າທີ່ມີແຜນການຈະທຳລາຍອາຊະຍາກຳຂ້າມຊາດຢ່າງເປັນລະບົບໃນເຂດດັ່ງກ່າວ. ບັນຫາຫລັກກໍ່ແມ່ນວ່າເຈົ້າໜ້າທີ່ລາວ ແລະ ຈີນຍັງສືບຕໍ່ອີງໃສ່ກຸ່ມບໍລິສັດ Kings Romans Group ເປັນຄູ່ຮ່ວມງານເພື່ອແກ້ໄຂບັນຫາເຫຼົ່ານີ້. ສຳລັບກຸ່ມບໍລິສັດ Kings Romans Group, ຄວາມເປັນໄປໄດ້ໃນການຫັນປ່ຽນການລົງທຶນຂະໜາດໃຫຍ່ດັ່ງກ່າວ - ປະມານ 3.5 ຕື້ໂດລາສະຫະລັດທີ່ໄດ້ນຳໄປລົງທຶນໃນເຂດດັ່ງກ່າວ, ເຊິ່ງກໍ່ອີງຕາມການລາຍງານຂອງບໍລິສັດເອງ - ໃຫ້ໄປສູ່ກິດຈະກຳທາງເສດຖະກິດທີ່ຖືກຕ້ອງຕາມກົດໝາຍນັ້ນເປັນໄປໄດ້ຍາກ. ເນື່ອງຈາກຊື່ສຽງທີ່ບໍ່ຄ່ອຍເໝາະສົມຂອງເຂດດັ່ງກ່າວ, ໂອກາດທີ່ຈະກາຍເປັນສູນກາງທີ່ປະສົບຜົນສຳເລັດສຳລັບທຸລະກິດທີ່ຖືກຕ້ອງຕາມກົດໝາຍ ຫຼື ສຳລັບການທ່ອງທ່ຽວແມ່ນບໍ່ຈະແຈ້ງ. ດັ່ງນັ້ນ, ກຸ່ມບໍລິສັດ Kings Romans Group ຈຶ່ງບໍ່ຫນ້າຈະໄດ້ຮັບການກະຕຸ້ນໃຫ້ປາບປາມກິດຈະກຳທີ່ຜິດກົດໝາຍ, ເຊິ່ງເຮັດໃຫ້ບັນດາສູນຕ່າງໆທີ່ເປັນລາຍຮັບຫຼັກຂອງຕົນ - ຄາສິໂນ ແລະ ລາຍຮັບຈາກກຸ່ມຫຼອກລວງ - ຍັງສາມາດສືບຕໍ່ໄດ້. ໃນປະຈຸບັນ, ຍຸດທະສາດຂອງກຸ່ມບໍລິສັດ Kings Romans Group ເບິ່ງຄືວ່າຈະເຮັດວຽກຮ່ວມກັບເຈົ້າໜ້າທີ່ໃນຮູບແບບ "ການຊຸກຍູ້" ເພື່ອສະແດງໃຫ້ເຫັນວ່າ ເປັນການປາບປາມ. ສິ່ງນີ້ກໍ່ໝາຍຄວາມວ່າ ກຸ່ມຫຼອກລວງຕ້ອງສົ່ງມອບຕົວບຸກຄົນຈຳນວນຫຼາຍຮ້ອຍຄົນຕໍ່ການປາບປາມແຕ່ລະຄັ້ງ ແລະ ຕ້ອງໃຊ້ເວລາຫຼາຍພໍສົມຄວນໃນການດຳເນີນການຢູ່ນອກເຂດດັ່ງກ່າວ.




ຄວາມສ່ຽງຂອງຢາເສບຕິດ ແລະ ສິນຄ້າຜິດກົດໝາຍອື່ນໆທີ່ເລັດລອດອອກຈາກເຂດ GTSEZ ເຂົ້າສູ່ປະເທດໄທຍັງຄົງມີຢູ່. ຮູບພາບປະກອບ

ມີສິ່ງທີ່ສະແດງໃຫ້ເຫັນຢ່າງຈະແຈ້ງແລ້ວວ່າ ບາງສ່ວນຂອງທຸລະກິດກຳລັງເຄື່ອນຍ້າຍໄປສູ່ແຫລ່ງຄາສິໂນອື່ນໆທີ່ສຳຄັນໃນປະເທດ, ໂດຍສະເພາະແມ່ນຄາສິໂນທີ່ຕັ້ງຢູ່ອ້ອມແອ້ມນະຄອນຫຼວງວຽງຈັນ. ປະຈຸບັນ, ເຂດໄຊນ່າທາວທີ່ບຶງທາດຫຼວງຂອງນະຄອນຫຼວງວຽງຈັນມີບຸກຄົນທີ່ມາຈາກເຂດ GTSEZ ໄປຢ້ຽມຢາມເປັນປະຈຳ, ແລະມີສິ່ງທີ່ສະແດງໃຫ້ເຫັນເພີ່ມຂຶ້ນວ່າ ບາງສ່ວນຂອງທຸລະກິດຫຼອກລວງກຳລັງດຳເນີນການໃນສະຖານທີ່ຕ່າງໆທີ່ເປັນທາງເລືອກໃນທົ່ວປະເທດລາວ. [64] ສິ່ງທີ່ໜ້າເປັນຫ່ວງເຊັ່ນດຽວກັນ ແມ່ນແນວໂນ້ມອີກອັນໜຶ່ງ ທີ່ເກີດຂຶ້ນຢູ່ອີກຝັ່ງຫນຶ່ງຂອງແມ່ນ້ຳຂອງ ໃນຝັ່ງມຽນມາ, ທີ່ເປັນເມືອງທ່າຂີ້ເຫລັກໃນປັດຈຸບັນມີຄາສິໂນ, ໂຮງແຮມ ແລະ 'ສະຖານທີ່' ທີ່ເກີດຂຶ້ນໃໝ່, ທີ່ເບິ່ງຄືວ່າສ້າງຂຶ້ນເພື່ອຮອງຮັບການເຄື່ອນໄຫວຫຼອກລວງທາງອອນລາຍ. ໃນກາງເດືອນພະຈິກ, ກະຊວງການຄ້າມຽນມາໄດ້ສົ່ງຄະນະຜູ້ແທນໄປເຂດ GTSEZ ເພື່ອເຈລະຈາ 'ການຮ່ວມມືທາງດ້ານເສດຖະກິດ' ທີ່ຫຼາຍຂຶ້ນລະຫວ່າງມຽນມາ ແລະ ເຂດດັ່ງກ່າວ. ເມື່ອພິຈາລະນາຈາກລັກສະນະຂອງຜູ້ປະກອບການທຸລະກິດໃນເຂດດັ່ງກ່າວ, ມັນເປັນໄປໄດ້ວ່າ ນີ້ເປັນການດຳເນີນການຂອງມຽນມາທີ່ຈະນຳເອົາກິດຈະກຳບາງສ່ວນທີ່ຜິດກົດໝາຍຂອງເຂດ GTSEZ ເຂົ້າມາໃນດິນແດນທີ່ຄວບຄຸມຂອງຕົນ.[65]

ມາດຕະການໃນປະຈຸບັນເພື່ອແກ້ໄຂບັນຫາເຫຼົ່ານີ້ໃຊ້ບໍ່ໄດ້ຜົນ. ໃນທີ່ສຸດ, ປະເທດລາວກໍ່ອາດຈະມີທາງເລືອກທີ່ບໍ່ຫຼາຍ, ທີ່ນອກຈາກການພິຈາລະນາເບິ່ງຄືນໃຫມ່ກ່ຽວກັບສັນຍາສຳປະທານ 99 ປີທີ່ໄດ້ລົງນາມກັບກຸ່ມບໍລິສັດ Kings Romans Group ຖ້າຫາກຕ້ອງການແກ້ໄຂວິກິດທີ່ກ່ຽວກັບອາຊະຍາກຳທີ່ຍັງດຳເນີນຢູ່ໃຫ້ມີປະສິດທິພາບບໍ່ວ່າຈະຢູ່ໃນລະດັບໃດກໍ່ຕາມ. ທາງເລືອກໜຶ່ງກໍ່ອາດຈະເປັນການຮ່ວມມືລະຫວ່າງປະເທດຢ່າງກວ້າງຂວາງທີ່ມີຈຸດປະສົງເພື່ອສ້າງກົດໝາຍ ແລະ ຄວາມເປັນລະບຽບຮຽບຮ້ອຍໃນເຂດທີ່ເນັ້ນໃຫ້ ກຸ່ມບໍລິສັດ Kings Romans Group ຕ້ອງຮັບຜິດຊອບ, ແລະ ຊຸກຍູ້ການປາບປາມອາຊະຍາກຳທີ່ຢູ່ນອກຈາກການຄຸ້ມຄອງຂອງກຸ່ມ. ຍຸດທະສາດທີ່ຍັງຈະລໍຖ້າໃຫ້ເກີດມີ 'ການຫັນປ່ຽນທາງເສດຖະກິດ' ຫຼື ທີ່ໃຫ້ໂອກາດຜູ້ກະທຳຜິດຢູ່ໃນປະເທດເພື່ອນບ້ານເຊັ່ນມຽນມາ ຫຼື ໃຫ້ພື້ນທີ່ໃນການຂະຫຍາຍຕົວຢູ່ບ່ອນອື່ນໃນລາວ, ກໍ່ຍັງຈະເຮັດໃຫ້ຄວາມສ່ຽງດ້ານຄວາມໝັ້ນຄົງໃນພາກພື້ນເພີ້ມຂຶ້ນເທົ່ານັ້ນ.